**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຊື່ຫົວໜ່ວຍແຮງງານ:________________________________ ເລກທີ:____________

ເບີໂທລະສັບຕິດຕໍ່:__________________ ທີ່: _______________ວັນທີ:___/___/2026

# ໃບຄໍາຮ້ອງ

**ຮຽນ:** ທ່ານຫົວໜ້າກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
**ເລື່ອງ:** ຂໍອະນຸຍາດແຜນນໍາໃຊ້ຜູ້ອອກແຮງງານຕ່າງປະເທດໃຫ້ຫົວໜ່ວຍແຮງງານ ໃນປີ 2026.

- ອີງຕາມ ມາດຕາ 37 ຂອງກົດໝາຍວ່າດ້ວຍການຈັດຫາງານ ສະບັບເລກທີ 37/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດ ເຂົ້າມາເຮັດວຽກຢູ່ ສປປ ລາວ ສະບັບເລກທີ 3667/ຣສສ, ລົງວັນທີ 27 ກັນຍາ 2023.

☐ **ຊື່ຫົວໜ່ວຍແຮງງານ:** ________________________________________________

☐ **ເລກລະຫັດຜູ້ເສຍອາກອນ(TIN):** ___________________________________________

☐ **ເລກລະຫັດປະກັນສັງຄົມວິສາຫະກິດ:** _______________________________________

ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອຂໍອະນຸຍາດແຜນນໍາໃຊ້ຜູ້ອອກແຮງງານຕ່າງປະເທດ ໃນປີ **2026** **ຈໍານວນ** _________**ຄົນ** ເພື່ອດໍາເນີນການຂໍອະນຸຍາດນໍາເຂົ້າ ແລະ ອອກບັດອະນຸຍາດເຮັດວຽກຢູ່:

☐ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງວຽງຈັນ/ແຂວງ__________________

☐ ກົມຄຸ້ມຄອງແຮງງານ (ສະເພາະຫົວໜ່ວຍແຮງງານ ມີສາຂາ ຫຼື ສະຖານທີ່ເຮັດວຽກ ທີ່ຕັ້ງຢູ່ຫຼາຍແຂວງ)

**ຂໍຢັ້ງຢືນວ່າ ຂໍ້ມູນທີ່ປະກອບໃນໃບຄໍາຮ້ອງນີ້ ເປັນຂໍ້ມູນຈິງ** ແລະ ພາຍຫຼັງໄດ້ຮັບການອະນຸມັດແຜນນໍາໃຊ້ຜູ້ອອກແຮງງານຕ່າງປະເທດແລ້ວ, ຫົວໜ່ວຍແຮງງານ ຈະດໍາເນີນການຂໍອະນຸຍາດນໍາເຂົ້າ ແລະ ອອກບັດອະນຸຍາດເຮັດວຽກໃຫ້ຖືກຕ້ອງຕາມທຸກຂັ້ນຕອນ, ທັງຮັບປະກັນວ່າຈະນໍາໃຊ້ຜູ້ອອກແຮງງານຕາມສະຖານທີ່ ທີ່ໄດ້ຮັບອະນຸຍາດ. ພ້ອມກັນນີ້, ຂ້າພະເຈົ້າ ຈະຮັບເອົາຜູ້ອອກແຮງງານລາວເຂົ້າເຮັດວຽກ ຄຽງຄູ່ກັບການນໍາໃຊ້ຜູ້ອອກແຮງງານຕ່າງປະເທດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ ເພື່ອໃຫ້ຜູ້ອອກແຮງງານຕ່າງປະເທດໄດ້ຖ່າຍທອດຄວາມຮູ້, ຄວາມສາມາດ ແລະ ເຕັກນິກວິຊາການ ໃຫ້ແກ່ຜູ້ອອກແຮງງານລາວ ໃຫ້ສາມາດທົດແທນພາຍຫຼັງສິ້ນສຸດກໍານົດການເຮັດວຽກຢູ່ ສປປ ລາວ ທັງເອົາໃຈໃສ່ພັດທະນາສີມືໃຫ້ຜູ້ອອກແຮງງານລາວໃນຫົວໜ່ວຍແຮງງານ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງໜ້າວຽກຕົວຈິງ.

ສະນັ້ນ, ຈຶ່ງໄດ້ສົ່ງຄໍາຮ້ອງ ສະເໜີມາຍັງທ່ານ ເພື່ອພິຈາລະນາຕາມທາງຄວນດ້ວຍ.

**ເຊັນ ແລະ ປະທັບກາຫົວໜ່ວຍແຮງງານ**

| **ການຄົ້ນຄວ້າ ຂອງວິຊາການ:** | **ການຄົ້ນຄວ້າ ຂອງຄະນະພະແນກ** |
|---|---|
| ☐ ໃບທະບຽນວິສາຫະກິດ<br>☐ ໃບອະນຸຍາດດໍາເນີນທຸລະກິດປີລ່າສຸດ<br>☐ ໃບທະບຽນອາກອນປີລ່າສຸດ<br>☐ ໃບຢັ້ງຢືນປະກັນສັງຄົມ<br>☐ ໃບແຈ້ງມອບອາກອນເງິນເດືອນລ່າສຸດ<br>☐ ໃບແຈ້ງມອບເງິນສົມທົບປະກັນສັງຄົມລ່າສຸດ<br>☐ ກົດລະບຽບພາຍໃນການຄຸ້ມຄອງແຮງງານ<br>☐ ໜັງສືຜ່ານແດນ,ວີຊາ(ຕປທ) / ບັດປະຈໍາຕົວ(ລ)<br>☐ ການແຈ້ງຂຶ້ນທະບຽນຝ່າຍບຸກຄະລາກອນ<br>☐ ການນໍາເຂົ້າແຮງງານຕ່າງປະເທດລ່າສຸດ<br>ຈໍານວນ:.......ຄົນ ນໍາໃຊ້.......ຄົນ ເຫຼືອ......ຄົນ<br>ຄໍາເຫັນ: .............................................<br>....................................................... | |

# ແຜນຄວາມຕ້ອງການນຳໃຊ້ຜູ້ອອກແຮງງານຕ່າງປະເທດ ແຕ່ລະໄຕມາດ ປະຈຳປີ 2026

| ລ/ດ | ຕຳແໜ່ງ | ວິຊາສະເພາະ / ໜ້າວຽກ ຄວາມຮັບຜິດຊອບ | ໄລຍະເວລາເຂົ້າມາ ເຮັດວຽກ (ເດືອນ) | ສັນຊາດ | ຄ່າແຮງງານ/ເງິນເດືອນ (ກີບ) | ຈຳນວນຄວາມຕ້ອງການ | | | |
|---|---|---|---|---|---|---|---|---|---|
| | | | | | | ໄຕມາດທີ 01 (ມັງກອນ-ມີນາ) | ໄຕມາດທີ 02 (ເມສາ-ມິຖຸນາ) | ໄຕມາດທີ 03 (ກໍລະກົດ-ກັນຍາ) | ໄຕມາດທີ 04 (ຕຸລາ-ທັນວາ) |
| 1 | | | | | | | | | |
| 2 | | | | | | | | | |
| 3 | | | | | | | | | |
| 4 | | | | | | | | | |
| 5 | | | | | | | | | |
| 6 | | | | | | | | | |
| 7 | | | | | | | | | |
| 8 | | | | | | | | | |
| 9 | | | | | | | | | |
| 10 | | | | | | | | | |
| ລວມ | | | | | | | | | |

ເຊັນ ແລະ ປະທັບກາຫົວໜ່ວຍແຮງງານ

# ໃບອະນຸມັດແຜນນຳໃຊ້ຜູ້ອອກແຮງງານຕ່າງປະເທດ ປະຈຳປີ 2025 ແລະ 2026 ທີ່ໄດ້ຮັບອະນຸມັດຜ່ານມາ

| ລ/ດ | ເລກທີໂກຕ້າ | ຈຳນວນອະນຸມັດ | ນຳເຂົ້າຕົວຈິງ | ຈຳນວນທີ່ຍັງເຫຼືອ | ເຫດຜົນນຳໃຊ້ບໍ່ໝົດ |
|---|---|---|---|---|---|
| **1** | | | | | |
| **2** | | | | | |
| **3** | | | | | |
| **4** | | | | | |
| **5** | | | | | |
| **6** | | | | | |
| **7** | | | | | |
| **8** | | | | | |
| **9** | | | | | |
| **10** | | | | | |

ເຊັນ ແລະ ປະທັບກາຫົວໜ່ວຍແຮງງານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຊື່ຫົວໜ່ວຍແຮງງານ: ________________________________

ບ້ານ: __________ ເມືອງ: ___________ ແຂວງ: ___________ ເລກທີ:___________

ເບີໂທ: _______________ ວັນທີ:___/___/2026

# ໃບມອບສິດ

**ເລື່ອງ:** ຂໍມອບສິດໃຫ້ພະນັກງານ ມາພົວພັນການຂໍອະນຸຍາດແຜນນຳໃຊ້ຜູ້ອອກແຮງງານຕ່າງປະເທດ ຢູ່ກົມການຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

- ອີງຕາມ ຄວາມຈຳເປັນ ແລະ ຄວາມຫຍຸ້ງຍາກ ໃນການພົວພັນປະສານງານ.

ຂ້າພະເຈົ້າ____________________ໃນນາມຜູ້ອຳນວຍການ______________________________

ເບີໂທ/Whatsapp ຕິດຕໍ່ ຂອງບໍລິສັດ/ຝ່າຍບຸກຄະລາກອນ: _____________________________________

ອີເມວສຳລັບປະສານງານ: ___________________________________________________

ແມ່ນໄດ້ມອບສິດໃຫ້ ທ່ານ/ນາງ_______________________ ເບີໂທລະສັບ: 020 _____________

ເປັນຜູ້ຕາງໜ້າໃນການພົວພັນ ຂໍອະນຸຍາດແຜນນຳໃຊ້ຜູ້ອອກແຮງງານຕ່າງປະເທດໃຫ້ຫົວໜ່ວຍແຮງງານ ໃນປີ 2026 ຢູ່ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ດັ່ງນັ້ນ, ຈຶ່ງເຮັດໃບມອບສິດດັ່ງກ່າວຂຶ້ນ ໄວ້ໃຫ້ຜູ້ກ່ຽວເປັນບ່ອນອີງໃນການພົວພັນປະສານງານນຳພາກສ່ວນທີ່ກ່ຽວຂ້ອງ.

**ເຊັນຜູ້ຮັບສິດ** **ເຊັນ ແລະ ປະທັບກາຫົວໜ່ວຍແຮງງານ (ຜູ້ມອບສິດ)**

ສະແກນເບິ່ງເອກະສານຕົວຢ່າງຄັດຕິດ

**<u>ເອກະສານຕິດຄັດທຸກໃບຕ້ອງປະທັບກາຈ້ຳແທ້ຂອງບໍລິສັດມາພ້ອມ:</u>**

1. ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ ແລະ ເອກະສານສັນຍາສຳປະທານຕ່າງໆ.
2. ສຳເນົາໃບທະບຽນອາກອນປີ, ບັນຊີລາຍຊື່ແຮງງານລາວ-ຕ່າງປະທດ ແລະ ແຈ້ງມອບອາກອນລາຍໄດ້ຈາກເງິນເດືອນພະນັກງານລ່າສຸດ.
3. ສຳເນົາກົດລະບຽບພາຍໃນກ່ຽວກັບການຄຸ້ມຄອງການນຳໃຊ້ແຮງງານ.
4. ສຳເນົາໃບຢັ້ງຢືນການຂຶ້ນທະບຽນປະກັນສັງຄົມ ລວມທັງໃບຈ່າຍເງິນສົມທົບ ສຳລັບຫົວໜ່ວຍແຮງງານ (ອປສ 2-01) ຂອງເດືອນລ່າສຸດ.
5. ສຳເນົາບັດປະຈຳຕົວ/ໜັງສືຜ່ານແດນ ຂອງຜູ້ຮັບສິດ.
6. ສຳເນົາໜັງສືຜ່ານແດນ ແລະ ໜ້າວິຊາເຂົ້າປະເທດ ສຳລັບເຈົ້າຂອງວິສາຫະກິດ ເປັນຄົນຕ່າງປະເທດ. ໃນກໍລະນີເປັນຄົນລາວ ແມ່ນສຳເນົາບັດປະຈຳຕົວ/ໜັງສືຜ່ານແດນ.
7. ສຳເນົາການຂຶ້ນທະບຽນຜູ້ປະສານງານຝ່າຍບຸກຄະລາກອນ (HR) ຕາມລິ້ງ https://www.lmi.gov.la/survey02.html.

**"ບັນດາຂໍ້ມູນຕ່າງໆທີ່ຂຽນລົງໃນໃບຄຳຮ້ອງ ລວມທັງເອກະສານຄັດຕິດ ເປັນບ່ອນອີງສຳຄັນໃນການພິຈາລະນາຂໍອະນຸຍາດແຜນນຳໃຊ້ຜູ້ອອກແຮງງານຕ່າງປະເທດ"**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ກົມການຈັດຫາງານ

# ສະໝັກຂໍນຳໃຊ້ລະບົບອະນຸມັດແຜນນຳໃຊ້ຜູ້ອອກແຮງງານຕ່າງປະເທດ ແບບອອນລາຍ (ຜ່ານລະບົບເວັບໄຊ).

**ຮຽນ:** ທ່ານຫົວໜ້າກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**ເລື່ອງ:** ຂໍລະຫັດ User and Password ນຳໃຊ້ລະບົບອະນຸມັດແຜນນຳໃຊ້ແຮງງານຕ່າງປະເທດ ແບບອອນລາຍ (ຜ່ານລະບົບເວັບໄຊ).

- ອີງຕາມ ກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸຍາດໃຫ້ຜູ້ອອກແຮງງານຕ່າງປະເທດ ເຂົ້າມາເຮັດວຽກຢູ່ ສປປ ລາວ ສະບັບເລກທີ 3667/ຮສສ, ລົງວັນທີ 27 ກັນຍາ 2023;
- ອີງຕາມ ແຈ້ງການ ກ່ຽວກັບຫົວໜ່ວຍແຮງງານ, ຫົວໜ່ວຍບໍລິການ, ໂຄງການລົງທຶນພາຍໃນ-ຕ່າງປະເທດ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໃນຂອບເຂດທົ່ວປະເທດ ທີ່ມີຈຸດປະສົງ ຂໍອະນຸຍາດແຜນນຳໃຊ້ຜູ້ອອກແຮງງານຕ່າງປະເທດ ເຂົ້າມາເຮັດວຽກ ຢູ່ ສປປ ລາວ ສະບັບເລກທີ 8670/ຫກ, ລົງວັນທີ 29 ພະຈິກ 2023.

| | |
|---|---|
| **ຊື່ຫົວໜ່ວຍແຮງງານ:** | |
| **Email:** | |
| **ເບີໂທຕິດຕໍ່:** | |
| **ເລກປະຈຳຕົວຜູ້ເສຍອາກອນ:** | |
| **ເລກທັດປະກັນສັງຄົມ:** | |

ຂ້າພະເຈົ້າ ______________________ ໃນນາມຜູ້ອຳນວຍການ ບໍລິສັດ______________________ ມີຄວາມຈຳເປັນຕ້ອງການຂໍລະຫັດ User and Password ນຳໃຊ້ລະບົບອະນຸມັດແຜນນຳໃຊ້ແຮງງານຕ່າງປະເທດ ແບບອອນລາຍ (ຜ່ານລະບົບເວັບໄຊ) ເພື່ອລົງທະບຽນຂໍ້ມູນຫົວໜ່ວຍແຮງງານ, ສະໜອງຂໍ້ມູນຄວາມຕ້ອງການຕຳແໜ່ງງານວ່າງຂອງແຮງງານລາວ ແລະ ແຮງງານຕ່າງປະເທດ ເຂົ້າສູ່ລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ ພາຍຫຼັງທີ່ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອະນຸມັດລະຫັດ User and Password ນຳໃຊ້ລະບົບໃຫ້ຫົວໜ່ວຍແຮງງານແລ້ວ, ພວກເຮົາ ສັນຍາວ່າ ຈະປະຕິບັດລະບຽບການນຳໃຊ້ລະບົບ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມເປົ້າໝາຍທີ່ໄດ້ຮັບອະນຸຍາດ. ຖ້າຫາກ ຫົວໜ່ວຍແຮງງານ ມີການກະທຳ ເຄື່ອນໄຫວຜິດຕໍ່ລະບຽບກົດໝາຍ ຫຼື ນຳໃຊ້ບໍ່ຖືກເປົ້າໝາຍທີ່ໄດ້ກຳນົດໃຫ້, ທາງຫົວໜ່ວຍແຮງງານ ຈະຂໍຮັບຜິດຊອບຕໍ່ໜ້າກົດໝາຍທຸກປະການ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ຈົ່ງພິຈາລະນາຕາມທາງຄວນດ້ວຍ.

**ເຊັນ ແລະ ປະທັບກາຫົວໜ່ວຍແຮງງານ**

**ເອກະສານຕິດຄັດມາພ້ອມ:**

- ໃບທະບຽນວິສາຫະກິດ ແລະ ອາກອນເງິນເດືອນລ້າສຸດ;
- ສຳເນົາໃບຢັ້ງຢືນການຂຶ້ນທະບຽນປະກັນສັງຄົມ ແລະ ໃບສະແດງເງິນສົມທົບເດືອນລ້າສຸດ;
- ສຳເນົາບັດປະຈຳຕົວ/ໜັງສືຜ່ານແດນ ເຈົ້າຂອງຫົວໜ່ວຍແຮງງານ;
- ໃບມອບສິດ (ໃນກໍລະນີ ເຈົ້າຂອງຫົວໜ່ວຍແຮງງານ ບໍ່ສາມາດມາຍື່ນເອກະສານດ້ວຍຕົນເອງ).